ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ
****** **** ******

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

ສຳນັກງານ ຄຄຊ
ເລກທີ. 05B.....
ວັນທີ. 30 MAY 2016
ໂທລະສັບ 021 217770

ເລກທີ: 22 /ຫກ
ນະຄອນຫຼວງວຽງຈັນ, ວັນທີ: 24 ພຶດສະພາ 2016

## ລາຍງານການເຄື່ອນໄຫວປະຈຳອາທິດ
## ທີ 09/05/2016 ຫາ 13/05/2016 ແລະ ແຜນການເຄື່ອນໄຫວໃນອາທິດຕໍ່ໄປ
## ຂອງທະນາຄານແຫ່ງ ສປປ ລາວ

I. ວຽກງານການເມືອງແນວຄິດ

ພະນັກງານທຸກຄົນມີຄວາມອຸ່ນອ່ຽນທຸ່ນທ່ຽງ ເຊື່ອໝັ້ນຕໍ່ການນໍາພາຂອງພັກ-ລັດ ມີສະຕິຕໍ່ການຈັດຕັ້ງ ແລະ ລະບຽບກົດໝາຍຢ່າງເຄັ່ງຄັດ; ຕັ້ງໜ້າປະຕິບັດວຽກງານຕາມພາລະບົດບາດ, ຕາມການຈັດຕັ້ງມອບໝາຍ, ປະຕິບັດວຽກງານຕາມລະບອບລວມສູນປະຊາທິປະໄຕ ໂດຍບຸກຄົນຮັບຜິດຊອບ ແລະ ປະຕິບັດລະບຽບລັດຖະກອນຢ່າງຕັ້ງໜ້າ, ມີຄວາມສາມັກຄີທັງພາຍໃນ ແລະ ພາຍນອກເປັນຢ່າງດີ,

II. ວຽກງານວິຊາສະເພາະ

1. ສະພາບເສດຖະກິດເງິນຕາສາກົນ

1.1 ອັດຕາແລກປ່ຽນສາກົນ

ອັດຕາແລກປ່ຽນຢູ່ຕະຫຼາດສາກົນອາທິດນີ້ທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາແຂງຄ່າຂຶ້ນ ເມື່ອທຽບໃສ່ເງິນເອີໂຣ ແລະ ຫຼາຍສະກຸນເງິນໃນພາກພື້ນອາຊີ ພາຍຫຼັງຕົວເລກຂາຍຍ່ອຍຂອງ ສ.ອາເມລິກາ ເພີ່ມຂຶ້ນ 1,3% ໃນເດືອນ 4/2016 ເມື່ອທຽບໃສ່ເດືອນຜ່ານມາ.

| ສະກຸນເງິນຕ່າງໆທຽບກັບໂດລາ | ອາທິດຜ່ານມາ 06/05/2016 | ອາທິດນີ້ 13/05/2016 | ເປີເຊັນ ແຂງຄ່າ(+) /ອ່ອນຄ່າ(–) |
|---|---|---|---|
| ເອີໂຣ/ໂດລາ | 1,1410 | 1,1358 | 0,46% |
| ໂດລາ/ເຢນ | 107,05 | 108,77 | -1,58% |
| ໂດລາ/ບາດ | 35,15 | 35,40 | -0,70% |
| ໂດລາ/ເປໂຊ | 47,21 | 46,62 | 1,27% |
| ໂດລາ/ຣູເປັຍ | 13.240,00 | 13.310,00 | -0,53% |
| ໂດລາ/ໂດລາສິງກະໂປ | 1,3592 | 1,3731 | -1,01% |
| ໂດລາ/ຢວນ | 6,5029 | 6,5194 | -0,25% |

1.2 ສະພາບລາຄານ້ຳມັນ ແລະ ຄຳໃນຕະຫຼາດໂລກ

ລາຄານ້ຳມັນໃນຕະຫຼາດໂລກເພີ່ມຂຶ້ນ 5,51% ຈາກ 45,73 ໂດລາ/ບາເຣວ ມາເປັນ 48,25 ໂດລາ/ບາເຣວ ຍ້ອນຄວາມຕ້ອງການນ້ຳມັນຂອງ ສ.ອາເມລິກາ ເພີ່ມຂຶ້ນ ເຫັນໄດ້ຈາກຄັງສຳຮອງນ້ຳມັນດິບຂອງ ສ.ອາເມລິກາ ໃນອາທິດທີ 6/5/2016

ຫຼຸດລົງ 3,41 ລ້ານບາເຣວ ເມື່ອທຽບໃສ່ອາທິດຜ່ານມາ. ສຳລັບລາຄາຄຳໃນຕະຫຼາດໂລກຫຼຸດລົງ 0,58% ຈາກ 1.278,75 ມາເປັນ 1.271,31 ໂດລາ/ອອນ.

## 2. ສະພາບເສດຖະກິດເງິນຕາພາຍໃນ

### 2.1 ສະພາບອັດຕາແລກປ່ຽນພາຍໃນ

ສະພາບອັດຕາແລກປ່ຽນອາທິດນີ້ທຽບໃສ່ອາທິດຜ່ານມາ ເຫັນວ່າເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,05% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,04% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດແຂງຄ່າຂຶ້ນ 0,15% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,33% ສຳລັບອັດຕາຕະຫຼາດ, ທຽບໃສ່ປີຜ່ານມາເຫັນວ່າ: ເງິນກີບທຽບໃສ່ເງິນໂດລາແຂງຄ່າຂຶ້ນ 0,59% ສຳລັບອັດຕາ ທຫກ ແລະ ແຂງຄ່າຂຶ້ນ 0,88% ສຳລັບອັດຕາຕະຫຼາດ, ສ່ວນເງິນກີບທຽບໃສ່ເງິນບາດອ່ອນຄ່າລົງ 1,14% ສຳລັບອັດຕາ ທຫກ ແລະ ອ່ອນຄ່າລົງ 1,04% ສຳລັບອັດຕາຕະຫຼາດ.

| ອັດຕາ | ອາທິດຜ່ານມາ 06/05/2016 | | | ອາທິດນີ້ 13/05/2016 | | | % (+) ເງິນກີບແຂງ/ (-)ອ່ອນຄ່າ | | |
|---|---|---|---|---|---|---|---|---|---|
| | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ | ຊື້ | ຂາຍ | ສະເລ່ຍ |
| ອັດຕາທະຖານ[1] | | | | | | | | | |
| ໂດລາ | 8.095,02 | 8.125,00 | 8.108,94 | 8.097,93 | 8.126,85 | 8.104,85 | -0,04% | -0,02% | 0,05% |
| ບາດ | 230,58 | 231,38 | 231,29 | 229,41 | 231,08 | 230,93 | 0,51% | 0,13% | 0,15% |
| ອັດຕາຕະຫຼາດ | | | | | | | | | |
| ໂດລາ | 8.119,67 | 8.146,33 | 8.133,00 | 8.114,92 | 8.144,40 | 8,129,66 | 0,06% | 0,02% | 0,04% |
| ບາດ | 231,44 | 232,70 | 232,07 | 230,48 | 232,11 | 231,30 | 0,41% | 0,25% | 0,33% |
| ຜິດດ່ຽງອັດຕາ ທຫກ ແລະ ຕະຫຼາດ: (+) ແມ່ນອັດຕາທະນາຄານທຸລະກິດແຂງກວ່າຕະຫຼາດ, (-) ແມ່ນອັດຕາທະນາຄານທຸລະກິດອ່ອນກວ່າຕະຫຼາດ, | | | | | | | | | |
| ໂດລາ | 0,30% | 0,26% | 0,30% | 0,21% | 0,22% | 0,31% | | | |
| ບາດ | 0,37% | 0,57% | 0,34% | 0,47% | 0,45% | 0.16% | | | |

### 2.2 ສະພາບຖານເງິນຕາ ແລະ ປະລິມານເງິນ M2

- ຖານເງິນຕາ ປະຈຳອາທິດນີ້ຫຼຸດລົງ 2,44% ທຽບໃສ່ວັນທີ 06/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາເພີ່ມຂຶ້ນ 2,12%;
- ປະລິມານເງິນ M2 ຫຼຸດລົງ 0,16% ເມື່ອທຽບໃສ່ວັນທີ 06/05/2016, ຖ້າທຽບໃສ່ໄລຍະດຽວກັນຂອງປີຜ່ານມາ ເພີ່ມຂຶ້ນ 11,78%.

### 2.3 ການຊື້-ຂາຍເງິນຕາ (ເງິນໂດລາ ແລະ ເງິນບາດ) ຂອງທົ່ວລະບົບທະນາຄານທຸລະກິດ

- ການຊື້-ຂາຍເງິນຕາຕ່າງປະເທດ (ເງິນໂດລາ ແລະ ເງິນບາດ) ຂອງບັນດາທະນາຄານທຸລະກິດກັບລູກຄ້າພາຍໃນ ປະຈຳອາທິດ (ວັນທີ 06-13/05/2016) ເຫັນວ່າ ທຫກ ຊື້ໂດລາສຸດທິ 25,08 ລ້ານໂດລາ (ໃນນີ້ ຊື້ໂດລາໄດ້ 67,64 ລ້ານໂດລາ ແລະ ຂາຍໂດລາໄດ້ 42,56 ລ້ານໂດລາ) ແລະ ຂາຍເງິນບາດສຸດທິ 1.934,35 ລ້ານບາດ (ໃນນີ້ ຊື້ບາດໄດ້ 308,95 ລ້ານບາດ ແລະ ຂາຍບາດໄດ້ 2.243,30 ລ້ານບາດ); ມູນຄ່າການຊື້-ຂາຍເງິນໂດລາ ແລະ ເງິນບາດເມື່ອທຽບໃສ່ອາທິດຜ່ານມາເຫັນວ່າ: ເງິນໂດລາເພີ່ມຂຶ້ນ 43,13% ແລະ ເພີ່ມຂຶ້ນ 163,60% ສຳລັບເງິນບາດ;
- ການຊື້-ຂາຍລະຫວ່າງທະນາຄານທຸລະກິດດ້ວຍກັນເຫັນວ່າ: ປະລິມານການຊື້-ຂາຍເງິນໂດລາມີ ຈຳນວນ 3,80 ລ້ານໂດລາ ແລະ ເງິນບາດມີຈຳນວນ 14,80 ລ້ານບາດ;

[1] %ການປ່ຽນແປງຂອງອັດຕາແລກປ່ຽນ ໃນອັດຕາຂອງ ທຫກ ແມ່ນໄດ້ຈາກອັດຕາສະເລ່ຍຖ່ວງນ້ຳໜັກ;

- ການຊື້-ຂາຍລະຫວ່າງ ທຫລ ກັບ ທທກ ເຫັນວ່າ: ທຫລ ຂາຍໂດລາສຸດທິ ຈຳນວນ 25,89 ລ້ານໂດລາ ແລະ ຂາຍເງິນບາດສຸດທິ ຈຳນວນ 53 ລ້ານບາດ;
- ການຊື້-ຂາຍລະຫວ່າງ ທຫລ ກັບ ພາກສ່ວນອື່ນໆ ເຫັນວ່າ: ທຫລ ຊື້ໂດລາໄດ້ສຸດທິ ຈຳນວນ 0,05 ລ້ານໂດລາ ແລະ ຊື້ບາດໄດ້ສຸດທິ ຈຳນວນ 0,33 ລ້ານບາດ.

ສະພາບການ ຊື້-ຂາຍເງິນຕາຕ່າງປະເທດ

(ຫົວໜ່ວຍ: ລ້ານ)

| | ອາທິດທີ່ຜ່ານມາ 02-06/05/2016 | | ອາທິດທີ 09-13/05/2016 | | (%) +ເພີ່ມຂຶ້ນ /-ຫລຸດລົງ | |
|---|---|---|---|---|---|---|
| | ໂດລາ | ບາດ | ໂດລາ | ບາດ | ໂດລາ | ບາດ |
| **1. ການຊື້ເງິນຕາຕ່າງປະເທດ** | **34,84** | **158,38** | **67,64** | **308,95** | **94,12%** | **95,07%** |
| - ທ/ຄທຸລະກິດລັດ | 8,07 | 110,35 | 14,44 | 140,53 | 78,89% | 27,35% |
| - ທ/ຄທຸລະກິດອື່ນໆ | 26,77 | 48,03 | 53,19 | 168,42 | 98,71% | 250,65% |
| **2. ການຂາຍເງິນຕາຕ່າງປະເທດ** | **42,14** | **809,84** | **42,56** | **2.243,30** | **0,98%** | **177,00%** |
| - ທ/ຄທຸລະກິດລັດ | 15,45 | 194,05 | 15,97 | 168,05 | 3,39% | -13,40% |
| - ທ/ຄທຸລະກິດອື່ນໆ | 26,70 | 615,80 | 26,59 | 2.075,25 | -0,42% | 237,00% |
| **ຊື້-ຂາຍສຸດທິ ທທກ** | **-7,30** | **-651,46** | **25,08** | **-1.934,35** | **-443,56%** | **196,92%** |
| ຜົດດ່ຽງ ຊື້-ຂາຍ | -20,95% | -411,32% | 37,08% | -626,09% | | |
| ມູນຄ່າການຊື້-ຂາຍ | **76,99** | **968,23** | **110,19** | **2.552,26** | **43,13%** | **163,60%** |
| **3. ການຊື້ຂາຍລະຫວ່າງທຫລ ກັບ ທທກ** | **-19,03** | **-50,00** | **-25,89** | **-53,00** | | |
| - ທຫລ ຊື້ຈາກ ທທກ | 0,00 | 0,00 | 0,00 | 0,00 | | |
| - ທຫລ ຂາຍໃຫ້ ທທກ | 19,03 | 50,00 | 25,89 | 53,00 | | |
| **4. ຊື້-ຂາຍ ລະຫວ່າງ ທທກ ດ້ວຍກັນ** | **0,20** | **47,20** | **3,80** | **14,80** | | |
| **5. ທຫລ ກັບ ພາກສ່ວນ ອື່ນໆ** | **0,24** | **0,18** | **0,05** | **0,33** | | |
| - ທຫລ ຊື້ຈາກ ພາກສ່ວນອື່ນໆ | 0,25 | 0,23 | 0,09 | 0,33 | | |
| - ທຫລ ຂາຍໃຫ້ ພາກສ່ວນອື່ນໆ | 0,01 | 0,04 | 0,04 | 0,00 | | |

### 2.4 ສະພາບອັດຕາເງິນເຟີ້

ອັດຕາເງິນເຟີ້ ໃນເດືອນ 05/2016 ຢູ່ໃນລະດັບ 0,6% (ຕົວເລກຄາດຄະເນ) ຫຼຸດລົງ 0,36% ຈາກ 0,96% ໃນເດືອນ 04/2016.

### 2.5 ການຄຸ້ມຄອງເງິນຕາຕ່າງປະເທດ ແລະ ການສົ່ງເສີມນຳໃຊ້ເງິນກີບ

ທຫລ ໄດ້ອະນຸຍາດໃຫ້ທະນາຄານທຸລະກິດນຳເງິນຕາຕ່າງປະເທດອອກນອກ ສປປ ລາວ ຈຳນວນ 84,89 ລ້ານໂດລາສະຫະລັດທຽບເທົ່າ ເຊິ່ງເພີ່ມຂຶ້ນ 77,5% ທຽບໃສ່ອາທິດຜ່ານມາ.

### 2.6 ສະພາບການເຄື່ອນໄຫວຊຳລະສະສາງຜ່ານທະນາຄານແຫ່ງ ສປປ ລາວ

ແຊັກເຄື່ອນໄຫວຜ່ານສູນຊຳລະສະສາງຂອງ ທຫລ ໃນອາທິດນີ້ ຈຳນວນ 900 ສະບັບ ທຽບໃສ່ອາທິດຜ່ານມາ ເພີ່ມຂຶ້ນ 21,62% ລວມຈຳນວນເງິນທີ່ໂອນຜ່ານທັງໝົດ 640,19 ຕື້ກີບ ເພີ່ມຂຶ້ນ 38,51% ເມື່ອທຽບໃສ່ອາທິດຜ່ານມາ.

ຕິດຕາມການໂອນເງິນຜ່ານລະບົບຊຳລະສະສາງແບບມູນຄ່າສູງ (RTGS) ລະຫວ່າງວັນທີ (6-12/05/2016) ມີຈຳນວນ 2.229 ຄັ້ງ ໂດຍມີມູນຄ່າ 279,09 ຕື້ກີບ ຫຼຸດລົງ 42,28% ຊຶ່ງທະນາຄານສົ່ງເສີມກະສິກຳ ເຮັດທຸລະກຳຫຼາຍກວ່າໝູ່ຈຳນວນ 556 ຄັ້ງ.

2.7 <u>ສະພາບການຊື້-ຂາຍຫຼັກຊັບໃນຕະຫຼາດຫຼັກຊັບລາວ</u>

ດັດຊະນີຕະຫຼາດຫຼັກຊັບລາວ ໃນອາທິດນີ້ ປິດຢູ່ທີ່ 1.147,99 ຈຸດ ເພີ່ມຂຶ້ນ 0,63% ເມື່ອທຽບໃສ່ອາ ທິດຜ່ານມາ, ຕະຫຼອດອາທິດ ມີປະລິມານຊື້-ຂາຍຮຸ້ນທັງໝົດ 461.000 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,49 ຕື້ກີບ ຫຼຸດລົງ 468,14% ທຽບໃສ່ອາທິດຜ່ານມາ. ໂດຍອາທິດນີ້ ມີຜູ້ລົງທຶນຕ່າງປະເທດຊື້-ຂາຍສະເລ່ຍກວມເອົາ 53,93% ຂອງມູນຄ່າການຊື້-ຂາຍທັງໝົດ.

ຮຸ້ນຂອງທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (BCEL) ມີລາຄາຊື້-ຂາຍສະເລ່ຍ 5.197 ກີບ/ຮຸ້ນ ເພີ່ມຂຶ້ນ 582 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 63.200 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 328,45 ລ້ານກີບ ເພີ່ມຂຶ້ນ 29,86% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 43,32% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ BCEL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນຢູ່ທີ່ 9,26%[2].

ຮຸ້ນຂອງບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (EDL-Gen) ມີລາຄາຊື້-ຂາຍສະເລ່ຍ 5.746 ກີບ/ຮຸ້ນ ເພີ່ມຂຶ້ນ 30 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 360.500 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 2,07 ຕື້ກີບ ເພີ່ມຂຶ້ນ 1.187,50% ເມື່ອທຽບໃສ່ອາທິດຜ່ານມາ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 59,88% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ EDL-Gen ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 13,83%[3].

ຮຸ້ນຂອງບໍລິສັດ ລາວເວີນ ມະຫາຊົນ (LWPC) ມີລາຄາປິດ 6.467 ກີບ/ຮຸ້ນ ເພີ່ມຂຶ້ນ 567 ກີບ/ຮຸ້ນ ເມື່ອທຽບ ໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 1,94 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນພາຍໃນປະເທດກວມເອົາ 100% ຂອງມູນຄ່າຊື້-ຂາຍຮຸ້ນ LWPC. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 2,77%[4].

ຮຸ້ນຂອງບໍລິສັດ ປິໂຕຣລ້ຽມເທຣດດິ້ງ ລາວ ມະຫາຊົນ (PTL) ມີລາຄາຊື້-ຂາຍສະເລ່ຍ 2.602 ກີບ/ຮຸ້ນ ຫຼຸດລົງ 11 ກີບ/ຮຸ້ນ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 35.700 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 92,88 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 83,10% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ PTL ທັງໝົດ. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດ ແມ່ນ 12,66%[5].

ຮຸ້ນຂອງບໍລິສັດ ສຸວັນນີ ໂຮມເຊັນເຕີ ມະຫາຊົນ (SVN) ມີລາຄາປິດທີ່ 3.400 ກີບ/ຮຸ້ນ ບໍ່ປ່ຽນແປງ ເມື່ອທຽບໃສ່ອາທິດທີ່ຜ່ານມາ, ມີປະລິມານຊື້-ຂາຍທັງໝົດ 1.300 ຮຸ້ນ ແລະ ມີມູນຄ່າການຊື້-ຂາຍ 4,42 ລ້ານກີບ. ໂດຍເປັນການຊື້-ຂາຍຂອງຜູ້ລົງທຶນຕ່າງປະເທດກວມເອົາ 25% ຂອງມູນຄ່າການຊື້-ຂາຍຂອງຮຸ້ນ SVN. ສັດສ່ວນຖືຄອງຮຸ້ນຂອງຜູ້ລົງທຶນຕ່າງປະເທດແມ່ນ 4,22%[6].

3. <u>ວຽກງານອື່ນໆ ທີ່ພົ້ນເດັ່ນ.</u>

- ສຳເລັດການຕ້ອນຮັບຄະນະກົມການຄັງ, ກະຊວງການເງິນໄທ ເພື່ອປຶກສາຫາລື ແລະ ແນະນຳການຜະລິດຫຼຽນໃໝ່ສຳລັບ ສປປ ລາວ ຈຳນວນສອງຮູບແບບ ເພື່ອນຳໃຊ້ເຂົ້າໃນຂອດຈໍລະຈອນ ທີ່ ທຫລ;

---

ລາຄາສະເລ່ຍແມ່ນລາຄາທີ່ສະເລ່ຍຊື້-ຂາຍຕໍ່ຮຸ້ນພາຍໃນອາທິດນັ້ນ;

[2]ສັດສ່ວນຖືຄອງຮຸ້ນ BCEL ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 10%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 1% ສຳລັບຜູ້ລົງທຶນປະເພດສະຖາບັນ;

[3]ສັດສ່ວນຖືຄອງຮຸ້ນ EDL-Gen ຂອງຜູ້ລົງທຶນຕ່າງປະເທດສາມາດຖືຄອງຮຸ້ນລວມກັນທັງໝົດ ບໍ່ເກີນ 25%, 1% ສຳລັບຜູ້ລົງທຶນປະເພດບຸກຄົນ ແລະ 5% ສຳລັບຜູ້ລົງທຶນປະເພດສະຖາບັນ;

[4]ສັດສ່ວນຖືຄອງຮຸ້ນ LWPC ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[5]ສັດສ່ວນຖືຄອງຮຸ້ນ PTL ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ;

[6]ສັດສ່ວນຖືຄອງຮຸ້ນ SVN ຂອງຜູ້ລົງທຶນຕ່າງປະເທດ ແມ່ນບໍ່ມີກຳນົດ.

- ສຳເລັດການສະເໜີຂໍວີຊາເຂົ້າອອກຫຼາຍເທື່ອ ແລະ ໃບອະນຸຍາດພັກເຊົາໃຫ້ແກ່ທ່ານ Friedrich Herbert Lechermann, ທີ່ປຶກສາທາງດ້ານການພັດທະນາຊັບສິນປະຈຳໂຄງການ GIZ-AFP ທີ່ແຂວງຈຳປາສັກ ໄປຍັງກະຊວງການຕ່າງປະເທດ;
- ສຳເລັດການເຂົ້າຮ່ວມ: ❶ສຳມະນາ ຮັບຟັງການເຜີຍແຜ່ບົດ Global Economic outlook 2016 ຂອງຫ້ອງການຜູ້ຕ່າງໜ້າ IMF ປະຈຳ ສປປ ລາວ ທີ່ UNDP, ❷ກອງປະຊຸມພົບປະ ແລະ ແລກປ່ຽນທັດສະນະລະຫວ່າງພາກສ່ວນກ່ຽວຂ້ອງທີ່ມີພາລະບົດບາດດ້ານນະໂຍບາຍກ່ຽວກັບການຈົດທະບຽນຄ້ຳປະກັນດ້ວຍສັງຫາລິມະຊັບ ທີ່ກະຊວງການເງິນ;
- ສຳເລັດການປັບປຸງລະບົບ MIS ເພື່ອໃຫ້ທະນາຄານທຸລະກິດສາມາດສົ່ງຂໍ້ມູນລາຍງານໃຫ້ ທຫລ ໄດ້ທັງຂໍ້ມູນທີ່ຖືກຕ້ອງ ແລະ ຂໍ້ມູນເບື້ອງຕົ້ນໃຫ້ ທຫລ ໄດ້ ໂດຍການປັບປຸງໜ້າ Interface ລະບົບ MIS ຂອງຜູ້ໃຊ້ພາກສ່ວນທະນາຄານທຸລະກິດ;
- ສຳເລັດການຈັດກອງປະຊຸມຮ່ວມກັບຄະນະຮັບຜິດຊອບພັດທະນາລະບົບການລາຍງານທຸລະກຳທີ່ໜ້າສົງໄສຜ່ານທາງອອນລາຍ (SRT Online).

III. <u>ແຜນວຽກຈຸດສຸມອາທິດຕໍ່ໄປ:</u>

- ສືບຕໍ່ດຳເນີນນະໂຍບາຍເງິນຕາ ແລະ ອັດຕາແລກປ່ຽນ ດັ່ງທີ່ໄດ້ກຳນົດໄວ້ໃນແຜນວຽກງານປະຈຳປີ ເພື່ອຮັກສາສະຖຽນລະພາບເງິນຕາແຫ່ງຊາດໃຫ້ມີຄວາມໝັ້ນທ່ຽງ;
- ຕິດຕາມຢ່າງເປັນປົກກະຕິໂດຍສະເພາະຕະຫຼາດເປີດ, ອັດຕາດອກເບ້ຍ ແລະ ອັດຕາແລກປ່ຽນລະຫວ່າງທະນາຄານ;
- ສືບຕໍ່ພິມທະນະບັດງວດທີ 5 ຊຸດ 2 ປະເພດໃບ 2.000 ກີບໃໝ່ ຈຳນວນ 30 ລ້ານໃບ;
- ສືບຕໍ່ກະກຽມການຈັດຝຶກອົບຮົມວຽກງານກວດກາພັກ-ລັດ ໃຫ້ພະນັກງານທີ່ເຮັດວຽກງານກວດກາໃນຂະແໜງການທະນາຄານ ຊຸດທີ VII ປະຈຳປີ 2016 ຢູ່ ແຂວງອຸດົມໄຊ;
- ສືບຕໍ່ຄົ້ນຄວ້າ: ❶ ສຶກສາຄົ້ນຄວ້າເນື້ອໃນຂອງຫຼັກການ ບາເຊວ 2, ວິທີປະຕິບັດ ແລະ ບົດຮຽນຂອງສາກົນ ເພື່ອເປັນແນວທາງໃນການຄົ້ນຄວ້າ ແລະ ຈັດຕັ້ງປະຕິບັດ, ❷ຄົ້ນຄວ້າກ່ຽວກັບການກຳນົດຮູບແບບ ແລະ ທ່າອ່ຽງຂອງການຟອກເງິນ (Typology) ຂອງ ສປປ ລາວ, ❸ຄົ້ນຄວ້າບົດແນະນຳມາດຕະຖານສາກົນດ້ານການບັນຊີ IAS18 ລາຍຮັບ, IAS36 ການເສື່ອມມູນຄ່າຂອງຊັບສິນ ແລະ IFRS10 ເອກະສານລາຍງານທາງການເງິນແບບລວມກິດຈະການ;
- ສືບຕໍ່ສ້າງ ແລະ ປັບປຸງຮ່າງລະບຽບວ່າດ້ວຍລາຍການທີ່ກ່ຽວພັນຂອງບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍສະພາບໍລິຫານຂອງບໍລິສັດອອກຈຳໜ່າຍຫຼັກຊັບ ແລະ ບໍລິສັດຈົດທະບຽນ, ຮ່າງລະບຽບວ່າດ້ວຍການອອກຈຳໜ່າຍຮຸ້ນກູ້ຢູ່ຕ່າງປະເທດຂອງບໍລິສັດພາຍໃນ ສປປ ລາວ, ຮ່າງລະບຽບວ່າດ້ວຍການໂອນຮຸ້ນຈົດທະບຽນໃນຕະຫຼາດຫຼັກຊັບ ແລະ ຮ່າງລະບຽບວ່າດ້ວຍການບັນຊີ ແລະ ການກວດສອບໃນວຽກງານຫຼັກຊັບ;
- ສືບຕໍ່ປະຕິບັດເງື່ອນໄຂ PRSO 8-11 ຕາມແຜນການ.

ຫົວໜ້າຫ້ອງການທະນາຄານແຫ່ງ ສປປ ລາວ.

ພາສີ ພິມມະກອນ